*ເຈັ້ຍຂໍ້ມູນກ່ຽວກັບພະຍາດຕິດຕໍ່*

# ໂຣກຕັບອັກເສບຊນິດ B

*ໂຣກຕັບອັກເສບຊນິດ **B** ແມ່ນການຕິດເຊື້ອທີ່ຮ້າຍແຮງຊນິດນຶ່ງ ຊຶ່ງແຜ່ຜາຍໂດຍທາງເລືອດຫຼືນ້ຳໃນຮ່າງກາຍ. ຂໍແນະນຳໃຫ້ເດັກນ້ອຍທຸກຄົນ, ແລະຜູ້ໃຫຍ່ທີ່ມີຄວາມສ່ຽງຕໍ່ການຕິດພະຍາດນີ້ໃຫ້ໄດ້ຮັບການສັກຢາປ້ອງກັນ. ການຮ່ວມເພດແບບປອດພັຍແລະການໃຊ້ເຄື່ອງມືທີ່ຂ້າເຊື້ອແລ້ວເປັນສິ່ງສຳຄັນໃນການປ້ອງກັນ.*

**ສະບັບແກ້ໄຂປັບປຸງ:** 06 ທັນວາ 2007

## ໂຣກຕັບອັກເສບຊນິດ B ແມ່ນຫຍັງ?

- ໂຣກຕັບອັກເສບຊນິດ B ແມ່ນການຕິດເຊື້ອທີ່ຕັບຊຶ່ງເກີດຈາກໄວຣັສຊນິດນຶ່ງຊຶ່ງເອີ້ນວ່າເຮັບພາທາຍທິສ B (hepatitis B). 'Hepatitis' ໝາຍເຖິງ "ອາການອັກເສບຫຼື ອາການໃຄ່ຂອງຕັບ".
- ເມື່ອຕິດເຊື້ອແລ້ວ, ຄົນຜູ້ນຶ່ງອາດຈະຂະຈັດການຕິດເຊື້ອນັ້ນ ແລະ ບໍ່ມີບັນຫາຫຍັງຂຶ້ນຕື່ມ; ຫຼື
- ກາຍເປັນການຕິດເຊື້ອແບບຊຳເຮື້ອ. ຜູ້ທີ່ຕິດເຊື້ອແບບຊຳເຮື້ອນັ້ນບາງເທື່ອກໍເປັນ "ຜູ້ຖືເຊື້ອ" ໄປໃນຕົວ.
- ບາງຄົນທີ່ຕິດເຊື້ອແບບຊຳເຮື້ອອາດມີບັນຫາທາງສຸຂພາບທີ່ເນື່ອງມາຈາກການຕິດເຊື້ອ, ໃນຂນະທີ່ບາງຄົນກໍບໍ່ມີບັນຫາຫຍັງ. ການທີ່ຄົນຜູ້ນຶ່ງຈະສາມາດຂະຈັດການຕິດເຊື້ອໄດ້ຫຼືກາຍເປັນການຕິດເຊື້ອແບບຖາວອນນັ້ນ ຂຶ້ນກັບອາຍຸຂອງເຂົາເປັນສ່ວນ ໃຫຍ່: 90% ຂອງແອນ້ອຍເກີດໃໝ່, 20-50% ຂອງເດັກນ້ອຍອາຍຸ 1-5 ປີ, ແລະ 1-10% ຂອງເດັກນ້ອຍທີ່ອາຍຸໃຫຍ່ ແດ່ແລ້ວ ແລະ ພວກຜູ້ໃຫຍ່, ໄດ້ກາຍມາເປັນຄົນຕິດເຊື້ອແບບຊຳເຮື້ອ. ຄົນໃດທີ່ຕິດເຊື້ອແລ້ວກໍຈະຕິດໄປຈົນຕລອດຊີວິດ, ແລະອາດຈະເປັນໂຣກຕັບແບບຕໍ່ເນື່ອງ. ຫຼາຍປີຫຼັງຈາກນັ້ນ ອາດຈະເກີດອາການແຊກຊ້ອນເຊັ່ນ ໂຣກຕັບແຂງ ຫຼື ມະເຮັງຕັບ.

## ໂຣກນີ້ມີອາການຢ່າງໃດແດ່?

- ຫຼາຍໆຄົນຈະບໍ່ສໍ່ສະແດງອາການຫຍັງເມື່ອຕິດເຊື້ອໃໝ່ໆ.
- ເມື່ອໂຣກອອກອາການ ຕາມປົກກະຕິຈະມີອາການຕ່າງໆເຊັ່ນ ໂຣກຂີ້ໝາກເຫຼືອງ (ຜິວໜັງແລະຕາເປັນສີເຫຼືອງ), ປັດສະວະສີຄ້ຳ, ອາຈົມສີຊີດ, ເມື່ອຍອ່ອນເພັຍ, ເຈັບໃນຊ່ອງທ້ອງ, ກິນເຂົ້າບໍ່ແຊບ, ປຸ້ນທ້ອງ, ຮາກ ແລະ ເຈັບຕາມຂໍ້.

## ໂຣກນີ້ແຜ່ພາຍໄດ້ຢ່າງໃດ?

ໂຣກຕັບອັກເສບ ຊນິດ B ແຜ່ພາຍໄປຫາຄົນອື່ນ ເມື່ອເລືອດຫຼືນ້ຳໃນຮ່າງກາຍ (ເຊັ່ນນ້ຳລາຍ, ນ້ຳອະສຸຈິ ແລະ ນ້ຳເມືອກໃນ ຊ່ອງຄອດ) ຊຶ່ງມີເຊື້ອໄວຣັສ hepatitis B ຜ່ານເຂົ້າໄປໃນຮ່າງກາຍຂອງຄົນໂດຍທາງ:

- ຜິວໜັງທີ່ຂາດ
- ເຍື່ອເມືອກ
- ທາງເສັ້ນເລືອດໂດຍການໃຊ້ແນວສັກຢາຮ່ວມກັນ, ຫຼືໃຊ້ເຂັມຫຼັງຈາກຄົນຕິດເຊື້ອໃຊ້ແລ້ວ, ໄດ້ຮັບບາດເຈັບຈາກເຂັມປັກ, ຫຼືໃຊ້ເຄື່ອງມືທີ່ມີເຊື້ອໂຣກ.
- ຮ່ວມເພດກັບຄົນທີ່ມີເຊື້ອໂຣກໂດຍບໍ່ໃຊ້ຖົງອະນາມັຍ.
- ນອກນີ້ ໂຣກຕັບອັກເສບຊນິດ B ກໍສາມາດແຜ່ພາຍໃຫ້ແອນ້ອຍຕອນຄອດໄດ້ ຈາກແມ່ທີ່ມີເຊື້ອໂຣກ.

## ແມ່ນໃຜແດ່ທີ່ສ່ຽງຕໍ່ການຕິດໂຣກນີ້?

ຈຳພວກຄົນທີ່ມີຄວາມສ່ຽງຕໍ່ການຕິດໂຣກນີ້ ຮວມມີ:

- ຄູ່ຮ່ວມເພດຂອງຄົນທີ່ຕິດເຊື້ອ
- ຄົນທີ່ໃຊ້ຢາແບບໃຊ້ເຂັມສັກ
- ແອນ້ອຍທີ່ເກີດຈາກແມ່ຊຶ່ງຕິດເຊື້ອແລ້ວ
- ຄົນທີ່ມີຄູ່ຮ່ວມເພດຫຼາຍຄົນ
- ຜູ້ຊາຍທີ່ຮ່ວມເພດກັບຜູ້ຊາຍດ້ວຍກັນ
- ຄົນເຈັບທີ່ຟອກເລືອດ
- ພະນັກງານດູແລສຸຂພາບ
- ເດັກນ້ອຍທີ່ເກີດໃນປະເທດທີ່ມີການຕິດເຊື້ອ hepatitis B ກັນຢ່າງແຜ່ຫຼາຍ
- ຄົນໃນຄອບຄົວທີ່ພົວພັນກັບຜູ້ທີ່ມີເຊື້ອ hepatitis B
- ຄົນຄຸກ.

## ຈະປ້ອງກັນໂຣກນີ້ໄດ້ຢ່າງໃດ?

### ສັກຢາປ້ອງກັນ

ຢາສັກວັກຊີນ hepatitis B ແມ່ນຖືວ່າໃຊ້ໄດ້ຜົນຫຼາຍໃນການປ້ອງກັນການຕິດເຊື້ອ.
ຂໍແນະນຳໃຫ້ຄົນຈຳພວກດັ່ງກ່າວ ຂ້າງລຸ່ມນີ້ໃຫ້ໄດ້ຮັບການສັກຢາປ້ອງກັນ:

- ເດັກນ້ອຍທຸກຄົນຕອນເກີດໃໝ່, ເມື່ອອາຍຸໄດ້ສອງເດືອນ, ສີ່ເດືອນ ແລະ ຫົກເດືອນ. ແພດຈະສັກຢາວັກຊີນນີ້ໃຫ້ທີ່ໂຮງໝໍ ຄອດລູກ ແລະ ທ່ານໝໍຄອບຄົວຂອງທ່ານກໍສາມາດສັກໃຫ້ໄດ້ ຫຼື ທີ່ ຄລີນິກ ຊຶ່ງໃຫ້ການສັກຢາວັກຊີນໃຫ້ເດັກນ້ອຍທົ່ວໆໄປ.
- ເດັກອາຍຸ 12 ປີທຸກຄົນທີ່ຍັງໄດ້ສັກຢາປ້ອງກັນຕອນຍັງເປັນແອນ້ອຍ. ມີການສັກຢາວັກຊີນນີ້ ໃຫ້ຕາມໂຮງຮຽນມັທຍົມ.
- ຄົນໃດທີ່ຢູ່ໃນຄອບຄົວດຽວກັນຫຼືມີການຮ່ວມເພດກັບຄົນທີ່ມີເຊື້ອໂຣກນີ້.

- ຜູ້ຊາຍທີ່ຮ່ວມເພດກັບຜູ້ຊາຍດ້ວຍກັນ
- ຄົນທີ່ມີເຊື້ອການະໂຣກຢູ່ແລ້ວ
- ຄົນທີ່ໃຊ້ຢາໂດຍການສັກ
- ຄົນເຈັບທີ່ຟອກເລືອດ
- ຄົນທີ່ຕ້ອງໃຊ້ຜລິດພັນຈາກເລືອດເພື່ອປິ່ນປົວອາການເລືອດຈັບກັນເປັນກ້ອນ
- ຄົນທີ່ເປັນພະຍາດຕັບຊຳເຮື້ອຫຼືເປັນໂຣກຕັບອັກເສບຊນິດ C
- ຜູ້ອາສັຍຫຼືພະນັກງານຕາມສະຖານທີ່ດູແລຄົນພິການທາງສມອງ
- ຄົນຄຸກແລະພະນັກງານທີ່ເຮັດວຽກຕາມສະຖານທີ່ກັກຂັງດັດສ້າງ
- ພະນັກງານດູແລສຸຂພາບ
- ຜູ້ທີ່ເຮັດວຽກຢູ່ໂຮງເຢັນເກັບສົບ
- ພະນັກງານສຸກເສີນ.

## ການປ້ອງກັນບໍ່ໃຫ້ໂຣກແຜ່ຜາຍ

ເພື່ອປ້ອງກັນບໍ່ໃຫ້ໂຣກ hepatitis B ແຜ່ຜາຍ:

- ໄປຮັບການສັກຢາປ້ອງກັນ
- ໃຊ້ຖົງອະນາມັຍເມື່ອຮ່ວມເພດກັບຄູ່ຮ່ວມເພດຄົນໃໝ່ຫຼືກັບຄູ່ຄອງທີ່ມີເຊື້ອ hepatitis B ແລ້ວ ຖ້າທ່ານເອງຍັງບໍ່ໄດ້ສັກຢາ ປ້ອງກັນເທື່ອ.
- ຖ້າທ່ານຖືພາ, ທ່ານຄວນໄປກວດເລືອດຫາເບິ່ງເຊື້ອ hepatitis B; ເດັກທີ່ຄອດຈາກແມ່ຊຶ່ງມີເຊື້ອ hepatitis B ຕ້ອງໄດ້ ຮັບການສັກຢາປ້ອງກັນຊຶ່ງເອີ້ນວ່າ hepatitis B immunoglobulin (HBIG) ແລະຕ້ອງສັກພາຍໃນ 12 ຊົ່ວໂມງ ຫຼັງຄອດ.
- ຢ່າໃຊ້ເຄື່ອງມືການສັກຢາຮ່ວມກັບຄົນອື່ນ
- ຢ່າໃຊ້ເຄື່ອງຂອງໃຊ້ສ່ວນຕົວໃດໆທີ່ອາດມີເລືອດຕິດຢູ່ (ເຊັ່ນ ມີດແຖ ຫຼື ແປງຖູແຂ້ວ)
- ຖ້າຈະສັກລາຍຫຼືເຈາະບ່ອງສ່ວນໃດສ່ວນນຶ່ງຂອງຮ່າງກາຍ, ໃຫ້ແນ່ໃຈວ່າຄົນສັກໃຫ້ນັ້ນໃຊ້ເຄື່ອງ ມືທີ່ໃຊ້ແລ້ວຖິ້ມໂລດຫຼືທີ່ໄດ້ ຂ້າເຊື້ອແລ້ວ.
- ຄົນທີ່ບໍ່ມີພູມຕ້ານ ທີ່ຈັບບາຍຄົນທີ່ມີເຊື້ອ HBV ຕ້ອງໄດ້ຮັບ HBIG ແລະ ສັກຢາກັນໂດຍດ່ວນທີ່ສຸດ, ຖ້າແມ່ນຈັບບາຍເລືອດ ແມ່ນພາຍໃນ 72 ຊົ່ວໂມງ; ຖ້າແມ່ນການຮ່ວມເພດແມ່ນພາຍໃນ 24 ມື້.

ຖ້າທ່ານມີເຊື້ອໂຣກນີ້ຢູ່ໃນຕົວ:

- ຢ່າບໍຣິຈາກເລືອດ, ອະວັຍວະທາງໃນ ຫຼືເນື້ອເຍື່ອ ຖ້າທ່ານມີເຊື້ອ hepatitis B
- ໃຫ້ບອກທ່ານໝໍຫຼືໝໍແຂ້ວວ່າທ່ານມີເຊື້ອໂຣກນີ້
- ໃຫ້ຣະມັດຣະວັງເປັນພິເສດ ເພື່ອໝັ້ນໃຈວ່າບໍ່ໃຫ້ຄົນອື່ນມາຊູນຖືກເລືອດຫຼືນ້ຳໃນຮ່າງກາຍຂອງທ່ານ. ໃຫ້ເຊັດຮອຍເລືອດ ແລະນ້ຳຕ່າງໆ ດ້ວຍຜ້າຂົນໜູແລະທຳຄວາມສະອາດໃຫ້ຖີ່ຖ້ວນ ດ້ວຍນ້ຳຢາທຳຄວາມສະອາດແລະນ້ຳ ຈົນຮອຍເຫຼົ່ານັ້ນ ໝົດໄປ. ຖ້າເລືອດເປື້ອນເປັນຮອຍໃຫຍ່ຢູ່ເທິງພົມ, ອາດຈຳເປັນຕ້ອງໄດ້ທຳຄວາມສະອາດ ດ້ວຍແຊມພູຫຼືທຳຄວາມສະອາດ ດ້ວຍອາຍນ້ຳ.

- ໃຫ້ປິດປາກບາດຂອງທ່ານດ້ວຍຜ້າພັນບາດທີ່ກັນນ້ຳ
- ໃຫ້ໃຊ້ຖົງອະນາມັຍກັບຄູ່ຮ່ວມເພດຄົນໃໝ່, ແລະກັບຄູ່ຮ່ວມເພດທີ່ຍັງບໍ່ມີພູມຕ້ານທານ.

## ຈະກວດຫາໂຣກນີ້ໄດ້ຢ່າງໃດ?

ການກວດເລືອດຈະສາມາດບອກໄດ້ວ່າຄົນໆນຶ່ງເຄີຍໄດ້ຕິດເຊື້ອ hepatitis B ມາກ່ອນບໍໃນອະດີດ, ແລະສາມາດບອກໄດ້ ດ້ວຍວ່າຄົນໆນັ້ນໄດ້ຕິດເຊື້ອແບບຊຳເຮື້ອບໍ. ການກວດວິທີອື່ນໆ, ເຊັ່ນກວດເບິ່ງການທຳງານຂອງຕັບ, ກໍສາມາດບອກໄດ້ເຊັ່ນກັນ ວ່າຕັບໄດ້ຖືກທຳລາຍຫຼືບໍ່.

## ຈະປິ່ນປົວພຍາດນີ້ໄດ້ຢ່າງໃດ?

ຄົນບາງຄົນອາດໄດ້ຮັບຜົນປໂຍດຈາກການປິ່ນປົວໂດຍໃຊ້ວິທີຕໍ່ຕ້ານເຊື້ອໄວຣັສ. ໃຫ້ປຶກສາກັບທ່ານໝໍຂອງທ່ານເບິ່ງວ່າ ຈະມີວິທີ ປິ່ນປົວຢ່າງໃດແດ່. ຄົນທີ່ຕິດເຊື້ອ hepatitis B ແບບຊຳເຮື້ອຄວນດູແລຮັກສາຕັບຂອງຕົນເອງໃຫ້ດີ ແລະ ຄວນສັກຢາກັນ hepatitis A ດ້ວຍຖ້າຍັງບໍ່ມີພູມຕ້ານທານມາກ່ອນ. ການດື່ມເຫຼົ້າສາມາດເຮັດໃຫ້ຕັບຂອງທ່ານມີອາການເລວຮ້າຍລົງໄດ້.

## ພແນກສາທາຣະນະສຸກມີທ່າທີຢ່າງໃດຕໍ່ໂຣກນີ້?

Hepatitis B ແມ່ນພຍາດທີ່ທັງທ່ານໝໍແລະຫ້ອງທົດລອງຕ້ອງໄດ້ລາຍງານໃຫ້ທາງການຊາບ. ພະນັກງານຂອງພແນກ ສາທາຣະນະສຸກຈະທຳການຕິດຕາມການຕິດເຊື້ອຣາຍໃໝ່ເພື່ອຄົ້ນຫາສາເຫດການສົ່ງ ແລະຄວບຄຸມບໍ່ໃຫ້ໂຣກແຜ່ຕື່ມອອກໄປ.

## ຣາຍລະອຽດເພີ້ມເຕີມ - ພແນກສາທາຣະນະສຸກແຫ່ງຣັດ NSW

ຖ້າທ່ານຕ້ອງການຣາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ທ່ານໝໍຂອງທ່ານ, ພແນກສາທາຣະນະສຸກທ້ອງຖິ່ນ ຫຼື ສູນອະນາໄມຊຸມຊົນ - ໃຫ້ເບິ່ງພາຍໃຕ້ຫົວຂໍ້ຣັຖບານປະຈຳຣັດ *NSW Government* ທາງໜ້າຂອງສມຸດ ໂທຣະສັບ (White Pages).

| ເຂດໃນຕົວເມືອງ | ສະຖານທີ່ | ເລກໂທຣະສັບ | ເຂດຊົນນະບົດ | ສະຖານທີ່ | ເລກໂທຣະສັບ |
|---|---|---|---|---|---|
| **Northern Sydney/Central Coast** | Hornsby | 02 9477 9400 | **Greater Southern** | Goulburn | 02 4824 1837 |
| | Gosford | 02 4349 4845 | | Albury | 02 6080 8900 |
| **South Eastern Sydney/Illawarra** | Randwick | 02 9382 8333 | **Greater Western** | Broken Hill | 08 8080 1499 |
| | Wollongong | 02 4221 6700 | | Dubbo | 02 6841 5569 |
| **Sydney South West** | Camperdown | 02 9515 9420 | | Bathurst | 02 6339 5601 |
| **Sydney West** | Penrith | 02 4734 2022 | **Hunter/New England** | Newcastle | 02 4924 6477 |
| | Parramatta | 02 9840 3603 | | Tamworth | 02 6767 8630 |
| **Justice Health Service** | Matraville | 02 9311 2707 | **North Coast** | Port Macquarie | 02 6588 2750 |
| **NSW Department of Health** | Nth Sydney | 02 9391 9000 | | Lismore | 02 6620 7500 |
| **NSW Health: www.health.nsw.gov.au** | | | | | |